ພະແນກ Community Services Division



# ໂຄງການ ທີ່ມອງເຫັນ

Washington State
Department of Social
& Health Services

*Transforming lives*

ກົມ ກໂມ ການບໂລິການ ຊານງກຣໂມ ລາເ ຊຸກຣາປຣາບ (DSHS) ໄດ້ພະຍາຍາມຢ່າງໜັກທີ່ຈະປ່ຽນແປງຊີວິດຂອງຜູ້ທີ່ພວກເຮົາຮັບໃຊ້ຢູ່.ໂຄງການທີ່ຖືກສະເນີໃຫ້ໂດຍພະແນກ ສຸມຊໂນ່ໂລິການ ສຸມຊໂນ (ຖືກບໍຣິຫານໂດຍ ປຣຸໂານຸານຢການ) ໄດ້ຖືກອອກແບບມາເພື່ອຈະຊ່ວຍເຫລືອລູກຄ້າຂອງພວກເຮົາໃຫ້ກໍ່ສ້າງພື້ນຖານທີ່ເຂັ້ມແຂງເພື່ອວ່າເຂົາເຈົ້າຈະສາມາດດໍາຣົງຊີວິດຂອງເຂົາເຈົ້າໃຫ້ໄດ້ດີທີ່ສຸດແລະຈະເຣີນເຕີບໂຕໃນທຸກໆຂັ້ນຕອນຂອງຊີວິດ.

ໃນຖານະເປັນຜູ້ບໍຣິຫານຂອງ ສຸມຊໂນ່ໂລິການ ສຸມຊໂນ, ຂ້າພະເຈົ້າມີກຽດທີ່ໄດ້ເຮັດວຽກນໍາພະນັກງານທີ່ອຸທິດໃສ່ວຽກງານຫລາຍເກີນກວ່າ 2,500 ຄົນເພື່ອຈະຮັບປະກັນວ່າພວກເຮົາໄດ້ເອົາການບໍຣິການທີ່ມີຄຸນນະພາບສູງສຸດໃຫ້ແກ່ປະຊາຊົນຂອງຣັດວໍຊິງຕັນ. ພວກເຮົາປະຕິບັດງານຂອງພວກເຮົາຜ່ານສາຍງານຂອງຫ້ອງການທ້ອງຖິ່ນ,ພະນັກງານປະຕິບັດງານຢູ່ນອກສະຖານທີ່,ຫ້ອງການບໍຣິການຊຸມນຸມຊົນເຄື່ອນທີ່ສອງຫ້ອງການແລະສູນກາງຕິດຕໍ່ປະຊາສັມພັນທົ່ວຣັດ.

ຂ້າພະເຈົ້າຫວັງວ່າທ່ານຈະພົບເຫັນຣາຍຣະອຽດຢູ່ໃນປື້ມຄູ່ມືຫົວນີ້ຈະຊ່ວຍເຫລືອໄດ້ຫລາຍທີ່ສຸດເມື່ອທ່ານຮຽນຮູ້ເພີ້ມເຕີມອີກກ່ຽວກັບການບໍຣິການແລະໂຄງການທີ່ພວກເຮົາເອົາໃຫ້.ຖ້າຫາກວ່າທ່ານມີຄໍາຖາມແນວໃດກ່ຽວກັບການບໍຣິການຂອງພວກເຮົາ,ກະຣຸນາຢ່າສູ່ລັ່ງເລໃຈທີ່ຈະຕິດຕໍ່ຫາສູນກາງຕິດຕໍ່ປະຊາສັມພັນຂອງພວກເຮົາໄດ້ທີ່ເລກ 1-877-501-2233.

ຂອບໃຈ.

ດ້ວຍຄວາມຮັກແພງ,



Babs Roberts / າຣານ ປຣຸນທຣານ / ສຸມຊໂນ່ໂລິການ ສຸມຊໂນ

## ຈິນຕະນາການ:

ບຸກຄົນ,ຄອບຄົວແລະຊຸມນຸມຊົນຈະເຣີນຮຸ່ງເຮືອງ

## ວັດຖຸປະສົງ:

ເພື່ອຈະປ່ຽນແປງຊີວິດໂດຍການໃຫ້ມີອໍານາດແກ່
ບຸກຄົນແລະຄອບຄົວເພື່ອຈະຈະເຣີນຮຸ່ງເຮືອງ

## ຄຸນຄ່າ:

ການສ້າງສັນສິ່ງໃຫມ່ໆ,ການຮ່ວມມືກັນ, ຄວາມນັບຖື,ຄວາມສາມາດອະທິບາຍໄດ້



## ອາຫານຈຳເປັນ

ໂຄງການ ການຣເດຸງິາກ ລາເ ການພຸກໂບຣໂນ ເອົາການເຂົ້າເຖິງອາຫານສົດ ແລະ ມີພະລານາມັຍໃຫ້, ຊຶ່ງແມ່ນຈຳເປັນສຳລັບຄອບຄົວທີ່ຈະຈະເຣີນຮຸ່ງເຮືອງ. ການຣເດຸງິາກ ລາເ ການພຸກໂບຣໂນ ປັນການປະສົມກັນຂອງໂຄງການຊ່ວຍເຫລືອອາຫານການກິນເພີ້ມເຕີມ (SNAP) ທີ່ໄດ້ຮັບເງິນ ທຶນຈາກຣັດຖະບານກາງ ແລະ ໂຄງການຊ່ວຍເຫລືອອາຫານທີ່ໄດ້ຮັບເງິນທຶນມາຈາກຣັດ (FAP) ຂອງຣັດວໍຊິງຕັນ, ຊຶ່ງແມ່ນສຳລັບຄົນເຂົ້າເມືອງມາຕັ້ງຖິ່ນຖານຖືກຕ້ອງຕາມກົດຫມາຍຜູ້ທີ່ບໍ່ທັນມີສິດໄດ້ຮັບການຊ່ວເຫລືອ SNAP ຂອງຣັດຖະບານກາງເທື່ອ.

ຄອບຄົວທີ່ມີເງື່ອນໄຂໄດ້ຮັບຈະໄດ້ຮັບບັດການຊ່ວຍເຫລືອທາງເອເລກໂຕຣນິກ (EBT).ບັດຈະຖືກຕື່ມໃສ່ໂດຍໄອໂຕມາຕິກໂລດທຸກໆເດືອນດ້ວຍຈຳນວນການຊ່ວຍເຫລືອທີ່ຖືກຄິດໄລ່ໄວ້ແລ້ວ. ການຣເດຸງິາກ ລາເ ການພຸກໂບຣໂນ ສາມາດຖືກໃຊ້ເພື່ອຈະຊື້ເອົາອາຫານ ແລະ ພືດພັນທີ່ຜະລິດອາຫານ ແລະ ແກ່ນພືດພັນຢູ່ຕາມຮ້ານຂາຍອາຫານ ແລະ ຕະລາດຊາວນາທີ່ເຂົ້າຮ່ວມ.

## ວຽກງານ ແລະ ການຝຶກຝົນຂອງ ການຣເດຸງິາກ ລາເ ການພຸກໂບຣໂນ

ການບໍຣິການດ້ານວຽກງານ, ການຝຶກຝົນ ແລະ ການອູ້ມຊູດ້ານວຽກງານກໍມີໄວ້ໃຫ້ໂດຍຜ່ານໂຄງການ ການຣເດຸງິາກ ລາເ ການພຸກໂບຣໂນ ການຊຸານຢຣເດຸ ຊໂຸາກຣາວ ຊໂາລາບ ກຣໂບ ກຣຸາ ທຣິທຣຸກນຍາກ (BFET), ໃຫ້ແກ່ບຸກຄົນຜູ້ທີ່ມີສິດໄດ້ຮັບທີ່ກຳລັງໄດ້ຮັບ ການຣເດຸງິາກ ລາເ ການພຸກໂບຣໂນ ຢູ່ຜູ້ທີ່ບໍ່ແມ່ນຜູ້ຮັບການຊ່ວຍເຫລືອ ຣດຸໂນ ລາເ ກຣຸາານທໂນງການ ທຣິຈຣໂາປເນ (TANF) ຫລື FAP.ຈົ່ງເບິ່ງ *www.dshs.wa.gov/esa/community-partnership-program/basic-food-employment-training-bfet* ເພື່ອຣາຍຣະອຽດເພີ້ມເຕີມ.



# ໂຄງການຊ່ວຍເຫຼືອຄົນແກ່ຊາຣາ, ຕາບອດ, ຫຼື ເສັຽອົງຄະ

ໂຄງການ ກໂນ ການກຣາ (ABD) ເອົາເງິນສົດຊ່ວຍເຫຼືອໃຫ້ແກ່ບຸກຄົນຜູ້ທີ່ມີອາຍຸ 65 ປີ ຫຼື ແກ່ກວ່າ, ຕາບອດ ຫຼື ດຳຣົງຊີວິດຢູ່ນຳຄວາມເສັຽອົງຄະທີ່ຈະຄ້າຍຄືວ່າຈະສອດຄ່ອງນຳກົດເກນຂອງເງິນຄວາມປອດພັຍເພີ້ມເຕີມ (SSI).

ຜ່ານໂຄງການ ABD, ບຸກຄົນຈະມີໂອກາດທີ່ຈະເຊື່ອມຕໍ່ນຳການບໍຣິການປິ່ນປົວສຸຂະພາບເພື່ອຈະແກ້ໄຂສິ່ງກີດກັ້ນເຂົາເຈົ້າ ຈາກການເຂົ້າຮ່ວມຢ່າງເຕັມທີ່ຫລາຍກວ່າເກົ່າອີກຢູ່ໃນຊຸມນຸມຊົນຂອງພວກເຮົາ. ການບໍຣິການເຫລົ່ານີ້ລວມເອົາ:

- ການຊອກເອົາຄຳຊີ້ນຳດ້ານວິຊາຊີບ ແລະ ການຝຶກຝົນຜ່ານການບໍຣິການຝຶກຝົນວິຊາຊີບໃຫ້ດີຄືນຄືເກົ່າ ເພື່ອຈະຊອກຫາວຽກງານທີ່ສຳຄັນແທ້.
- ການເຂົ້າເຖິງໂຄງການຊ່ວຍເຫລືອ ງຸ ທາບໂດ ຣຸ ກຣໂນ ປຣິການ (HEN) ເພື່ອຈະຊອກຫາເຮືອນຢູ່ທີ່ປອດພັຍ, ເປັນປະໂຍດຕໍ່ຮ່າງກາຍ ແລະ ຣາຄາຍ່ອມເຍົາ.
- ການຊ່ວຍເຫລືອສ່ວນບຸກຄົນໃນການເຂົ້າເຖິງໂຄງການເງິນຄວາມປອດພັຍເພີ້ມເຕີມ (SSI) ສຳລັບການອູ້ມຊູ ດ້ານການເງິນຣະຍະຍາວ.

# ໂຄງການສົ່ງຕໍ່ໄປຫາບ່ອນຢູ່ອາສັຍແລະຄວາມຕ້ອງການຈຳເປັນ

ໂຄງການສົ່ງຕໍ່ໄປຫາ ງຸ ທາບໂດ ຣຸ ກຣໂນ ປຣິການ (HEN) ເອົາໃຫ້ບຸກຄົນຜູ້ທີ່ບໍ່ສາມາດເຮັດວຽກໄດ້ຢ່າງ ໜ້ອຍ 90 ວັນຍ້ອນຄວາມບໍ່ສາມາດທາງຮ່າງກາຍ ແລະ/ຫລື ຈິດໃຈ, ດ້ວຍການເຂົ້າເຖິງສິ່ງຂອງຄວາມຕ້ອງການຈຳເປັນ. ສິ່ງເຫລົ່ານີ້ຈະລວມເອົາເຄື່ອງໃຊ້ສຸຂະພາບ ແລະອະນາມັຍສ່ວນຕົວ, ໃບຂີ້ຣົດເມ ແລະ ການອູ້ມຊູດ້ານບ່ອນຢູ່ອາສັຍທີ່ອາດເປັນໄປໄດ້ເຊັ່ນວ່າຄ່າ ເຊົ່າເຮືອນຈຳກັດ, ຄ່ານ້ຳຄ່າໄຟ ແລະ ການຊ່ວຍເຫລືອນຳການຍ້າຍເຮືອນ.

ເງື່ອນໄຂຮັບເອົາການສົ່ງຕໍ່ໄປຫາໂຄງການ HEN ຈະຖືກພິຈາຣະນາເບິ່ງໂດຍກົມ DSHS.ເງື່ອນໄຂຮັບເອົາການຊ່ວຍ ເຫລືອບ່ອນຢູ່ອາສັຍ HEN ຈະຖືກພິຈາຣະນາເບິ່ງໂດຍ ການຣເດຸາາກ ກຣໂນງດເກ ການດູາເລ ດເກ ຜ່ານສາຍງານ ຂອງອົງການບໍຣິການຊຸມນຸມຊົນທ້ອງຖິ່ນທີ່ຊ່ວຍເຫລືອບຸກຄົນຜູ້ທີ່ປະສົບບັນຫານຳການບໍ່ມີເຮືອນຢູ່ ຫລື ຜູ້ທີ່ຢູ່ໃນອັນຕະຣາຍທີ່ຈະກາຍ ເປັນບໍ່ມີເຮືອນຢູ່.



# ໂຄງການຊ່ວຍຈ່າຍຄ່າຝາກເດັກນ້ອຍ

ໂຄງການ ການຊານປຣຸ ກຣໂບກຣຸາກຣໂນງ ລາດ (WCCC) ແລະ ໂຄງການຊ່ວຍຄ່າຝາກເດັກນ້ອຍຕາມຣະດູການຊ່ວຍຈ່າຍຄ່າຂອງການຝາກເດັກນ້ອຍສຳລັບຄອບຄົວທີ່ມີເງື່ອນໄຂໄດ້ຮັບທີ່ມີພໍ່ແມ່ ຫລື ຜູ້ປົກຄອງຄົນອື່ນຜູ້ທີ່ກຳລັງເຮັດວຽກຢູ່ ຫລື ກຳລັງເຂົ້າຮ່ວມໃນກິຈກັມວຽກງານທີ່ຖືກອະນຸມັດໂດຍກົມ DSHS, ແລະ ຜູ້ທີ່ມີເດັກນ້ອຍຜູ້ທີ່ສອດຄ່ອງນຳກົດກຳນົດຂອງການເປັນສັນຊາດ. ຄອບຄົວທີ່ປະສົບບັນຫາການບໍ່ມີເຮືອນຢູ່ ແລະ ຜູ້ໃຫ້ການເບິ່ງແຍງດູແລເດັກນ້ອຍທີ່ເປັນຍາດພີ່ນ້ອງກັນຜູ້ທີ່ເຮັດວຽກຢູ່ອາດຈະໄດ້ຮັບການຈ່າຍຊ່ວຍຄ່າຝາກເດັກນ້ອຍຜ່ານໂຄງການ WCCC. ການຊ່ວຍຄ່າຝາກເດັກນ້ອຍຕາມຣະດູການຊ່ວຍຈ່າຍຄ່າຝາກເດັກນ້ອຍສຳລັບຄອບຄົວທີ່ມີເງື່ອນໄຂໄດ້ຮັບຜູ້ທີ່ເຮັດວຽກຕາມຣະດູການດ້ານກະສິກັມ, ອາສັຍຢູ່ໃນຄາວຕີທີ່ຖືກແຕ່ງຕັ້ງ ແລະ ບໍ່ໄດ້ຮັບເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນການຊ່ວຍຄ່າຝາກເດັກນ້ອຍຕາມຣະດູການ (TANF). ຢູ່ໃນກໍຣະນີສ່ວນຫລາຍ, ຄອບຄົວທີ່ໄດ້ຮັບການຊ່ວຍຈ່າຍຄ່າຝາກເດັກນ້ອຍຈະຕ້ອງຮັບຜິດຊອບສຳລັບເງິນຈ່າຍຮ່ວມທີ່ຈະຕ້ອງຈ່າຍໃຫ້ຜູ້ໃຫ້ການເບິ່ງແຍງດູແລເດັກນ້ອຍຂອງເຂົາເຈົ້າ, ດ້ວຍຈຳນວນເງິນທີ່ຂື້ນນຳຣາຍໄດ້ຂອງຄອບຄົວ.

ຢູ່ໃນໂຄງການເຫລົ່ານີ້, DSHS ຊ່ວຍຈ່າຍສຳລັບການຝາກເດັກນ້ອຍທີ່ຖືກເອົາໃຫ້ໂດຍສູນກາງຮັບຝາກເດັກນ້ອຍທີ່ມີໃບອະນຸຍາດ ຫລື ຖືກຢັ້ງຢືນ ແລະ ເຮືອນຮັບຝາກເດັກນ້ອຍ.ສຳລັບໂຄງການ WCCC, DSHS ສາມາດຊ່ວຍຈ່າຍສຳລັບຄ່າຝາກເດັກນ້ອຍທີ່ຖືກເອົາໃຫ້ໂດຍ:

- ສູນກາງຮັບຝາກເດັກນ້ອຍທີ່ມີໃບອະນຸຍາດ ຫລື ຖືກຢັ້ງຢືນ.
- ເຮືອນຮັບຝາກເດັກນ້ອຍຢູ່ນຳຄອບຄົວ ທີ່ມີໃບອະນຸຍາດ ຫລື ຖືກຢັ້ງຢືນ.
- ຍາດພີ່ນ້ອງຜູ້ທີ່ຖືກອະນຸມັດຜູ້ທີ່ໃຫ້ການເບິ່ງແຍງດູແລຢູ່ໃນເຮືອນຂອງເຂົາເຈົ້າເອງ.
- ຜູ້ໃຫຍ່ທີ່ຖືກອະນຸມັດຜູ້ທີ່ມາເຮືອນຂອງທ່ານເພື່ອຈະໃຫ້ການເບິ່ງແຍງດູແລ.



# ການຊ່ວຍເຫລືອ ຊົ່ວຄາວສໍາລັບຄອບ ຄົວຂັດສົນແລະການ ຊ່ວຍເຫລືອຄອບຄົວ ຂອງຣັດ

ໂຄງການ ຣດຸໂນ ລາເ ກຣຸາາມທໂນງການ ທຣິຈຣໂາປເນ (TANF) ແລະ ປຣາາເນກ ກຣຸາາມປໂດປຣາິ ການຣດຸາິາກ (SFA) ຈະເຮັດໃຫ້ແນ່ໃຈວ່າຄອບຄົວຂອງຣັດວໍຊິງຕັນຈະມີເຄື່ອງມືເພື່ອຈະກໍ່ສ້າງພື້ນຖານອັນແຂງແກ່ງສໍາລັບຊີວິດຂອງເຂົາເຈົ້າ,ຊຶ່ງຈະອະນຸຍາດຕໍ່ສູ້ນໍາພະຍຸຮ້າຍຂອງຊີວິດ.ພວກເຮົາເຮັດອັນນີ້ໄດ້ໂດຍການເຊື່ອມຕໍ່ນໍາເດັກນ້ອຍ ແລະ ພໍ່ແມ່ໄປໃສ່ແຫລ່ງຊ່ວຍເຫລືອເຫລົ່ານັ້ນໃຫ້ເປັນເງິນສົດຊ່ວຍເຫລືອຈໍານວນນ້ອຍໆຊົ່ວຄາວ ໂດຍອີງຕາມຂະນາດຂອງຄອບຄົວ,ການສົ່ງຕໍ່ໄປຫາແຫລ່ງຊ່ວຍເຫລືອຕາມຊຸມນຸມຊົນ (ລວມທັງໂອກາດທີ່ຈະຮຽນຮູ້ສໍາລັບເດັກນ້ອຍ) ,ແລະ ການບໍຣິການ Workfirst ສໍາລັບພໍ່ແມ່ຫລາຍໆຄົນ.

ຄອບຄົວ TANF/SFA ອາດຈະຍັງມີເງື່ອນໄຂໄດ້ຮັບຢູ່ສໍາລັບ:

- **ການຊ່ວຍເຫລືອເພີ້ມເຕີມສໍາລັບຄວາມຕ້ອງການເພີ້ມເຕີມ**– ຄົນຮັບເອົາເງິນ TANF/SFA ຜູ້ທີ່ປະເຊີນຫນ້ານໍາສະພາບການສຸກເສີນ,ເຊັ່ນວ່າການໄລ່ຫນີອອກຈາກເຮືອນ ຫລື ໃບແຈ້ງການຕັດນໍ້າຕັດໄຟ, ອາດຈະມີສິດໄດ້ຮັບເງິນເຖິງ $750 ໃນຣະຍະເວລາ 12 ເດືອນເພີ້ມເຕີມໃສ່ເງິນຊ່ວຍເຫລືອປະຈໍາເດືອນຂອງເຂົາເຈົ້າເພື່ອຈະຕອບສະນອງຄວາມຕ້ອງການດ່ວນ.

- **ການຊ່ວຍເຫລືອເງິນສົດຜັນປ່ຽນຕໍ່ມາ**– ຜູ້ສະມັກຂໍເອົາເງິນ TANF/SFA ຜູ້ທີ່ປະເຊີນຫນ້ານໍາຄວາມຕ້ອງການໃນຣາຍຈ່າຍເຊັ່ນວ່າຄ່າເຊົ່າເຮືອນ ຫລື ຄ່ານໍ້າຄ່າໄຟອາດຈະມີສິດໄດ້ຮັບການຈ່າຍເງິນເທື່ອດຽວແທນທີ່ວ່າຈະເປັນເງິນຊ່ວຍເຫລືອປະຈໍາເດືອນເພື່ອວ່າຈະເຮັດໃຫ້ສະພາບການຂອງຜູ້ສະມັກຂໍເອົາຫຸ່ນທ່ຽງກ່ອນທີ່ເຂົາເຈົ້າຈະສາມາດໄດ້ຮັບຣາຍໄດ້ທີ່ໄວ້ໃຈໄດ້.



# ໂຄງການ WorkFirst

ໂຄງການ WorkFirst ເປັນສ່ວນປະກອບຂອງວຽກງານ ແລະ ການຝຶກຝົນຂອງໂຄງການ TANF/SFA ຂອງຣັດວໍຊິງຕັນ, ທີ່ສະເໜີການບໍຣິການສຳລັບພໍ່ແມ່ຜູ້ທີ່ຢູ່ໃນເສັ້ນທາງນຳພາໄປສູ່ເສດຖະກິດໝັ້ນຄົງຂອງເຂົາເຈົ້າເພື່ອວ່າເຂົາເຈົ້າ ແລະ ລູກຂອງເຂົາເຈົ້າສາມາດຈະເຣີນຮຸ່ງເຮືອງ.

ພະນັກງານ WorkFirst ທີ່ມຸ່ງໝັ້ນນຈະອູ້ມຊູຜູ້ເຂົ້າຮ່ວມເພື່ອຈະຊີ້ບອກເປົ້າໝາຍສ່ວນຕົວແລະ ນຳພາໃນກິຈກັມທີ່ຈະເພີ້ມຄວາມສຳເຣັດຢູ່ໃນໂຄງການອື້ນ.ກົມ ກໂມ ການບໂລີການ ຊານງກຣໂມ ລາເ ຊຸກຣາປຣາບ, ຊາທຣາມາ ກຣໂມງຊາປຣາ ຊໂາລາບ ຊຸມຊໂມ, ຊາທຣາມາ ກຣໂມງຊາປຣາ ຊໂາລາບ ຊຸມຊໂມ ແລະ ວິທຣາມຢາລາິ ທເກນິກ, ແລະ ການຣເດຸາິກ ກຣໂມງຄເກ ການດຸາເລ ດເກ ເຣັດວຽກຮ່ວມກັນນຳໂຄງການ WorkFirst ເພື່ອຈະເຊື່ອມຕໍ່ພໍ່ແມ່ ແລະຜູ້ເບິ່ງແຍງດູແລໃສ່ການສຶກສາ,ການຝຶກຝົນວິຊາຊີບ ແລະ ໂອກາດວຽກງານຕ່າງໆ. ຫ້ອງການແຕ່ລະບ່ອນຮັບຮູ້ຄຸນຄ່າຂອງບຸກຄົນແລະການແບ່ງສ່ວນຊ່ວຍເຫລືອໃນຄວາມຊຳນານໂດຍສະເພາະພາຍວນຊຸມນຸມຊົນຂອງເຂົາເຈົ້າ.

ພະນັກງານ WorkFirst ຍັງຈະຊ່ວຍເຫລືອບຸກຄົນໃຫ້ກໍ່ສ້າງພື້ນຖານອັນເຂັ້ມແຂງເພື່ອຄວາມຢູ່ເຢັນເປັນສຸກໂດຍການເອົາການບໍຣິການອູ້ມຊູໃຫ້ເພື່ອຈະຊ່ວຍເຫລືອຕັດອອກໄປໃນສິ່ງກີດກັ້ນຂອງຣະບົບນຳພາໄປສູ່ການເຂົ້າເຖິງພະລັງແຮງງານ,ຊຶ່ງຈະລວມເອົາເຄື່ອງນຸ່ງເຣັດວຽກ,ນ້ຳມັນຣົດ,ຄ່າສ້ອມແປງຣົດ,ຣາຍຈ່າຍການສຶກສາ,ເຄື່ອງມື ແລະ ອຸບປະກອນ ແລະ ຣາຍຈ່າຍການຍົກຍ້າຍສະຖານທີ່ອາສັຍ.

## ໂຄງການຊ່ວຍເຫລືອ ຜູ້ຍິງຖືພາຕັ້ງທ້ອງ

ໂຄງການ ການຊຸານປຣດຸ າເມນຍີນງ ກໂາລານງ ທຣຸປຣາ (PWA) ເປັນໂຄງການທີ່ຖືກອອກເງິນທຶນໃຫ້ໂດຍຣັດຊຶ່ງຈະເອົາເງິນສົດຊ່ວຍເຫລືອໃຫ້ແກ່ຜູ້ທີ່ຖືພາຕັ້ງທ້ອງທີ່ມີຣາຍໄດ້ຕ່ຳ,ຜູ້ທີ່ບໍ່ມີເງື່ອນໄຂໄດ້ຮັບໂຄງການ ຣດຸໂມ ລາເ ກຣຸາານທໂມງການ ທຣິຈຣໂາປເມ (TANF) ຫລື ປຣາາເມກ ກຣຸາານປໂດປຣາິ ການຣເດຸາິກ (SFA).



# ຫ້ອງການ Office of Refugee & Immigrant Assistance

ບຸກຄົນຜູ້ທີ່ເປັນຄົນອົບພະຍົບ ແລະ ຄົນເຂົ້າເມືອງມາຕັ້ງຖິ່ນຖານສາມາດເຂົ້າເຖິງໂຄງການ ແລະ ການບໍລິການພິເສດສະເພາະຊຶ່ງຈະນໍາພາໄປສູ່ຄວາມໝັ້ນທ່ຽງທາງເສດຖະກິດ ແລະ ການປັບຕົວເຂົ້າສູ່ຊຸມນຸມຊົນຂອງເຂົາເຈົ້າ.

ການບໍລິການເຫລົ່ານີ້ລວມເອົາ:

- ເງິນສົດອົບພະຍົບ ແລະ ການຊ່ວຍເຫລືອພະຍາບານ.
- ໂຄງການສຸຂະພາບແລະຄວາມຢູ່ດີມີແຮງຂອງອົບພະຍົບ.
- ການບໍລິການດ້ານວຽກງານ.
- ໂຄງການສອນພາສາອັງກິດເປັນພາສາທີສອງ.
- ໂຄງການຄວບຄຸມເບິ່ງນໍາສໍານວນຄົບຖ້ວນ.
- ການຊ່ວຍເຫລືອດ້ານການເຂົ້າເມືອງແລະບໍລິການດ້ານການເປັນສັນຊາດ.
- ໂຄງການສະທ້ອນເຖິງໂຮງຮຽນຂອງອົບພະຍົບ.
- ການເບິ່ງແຍງດູແລເດັກກໍ່າພ້າຕໍ່າກວ່າກະສຽນຂອງຄົນອົບພະຍົບທີ່ບໍ່ມີຄົນຕິດຕາມມານໍາ.
- ການບໍລິການສຸຂະພາບໂຣກຈິດສໍາລັບອົບພະຍົບ.
- ການບໍລິການດ້ານການປ່ຽນສັນຊາດ.

ຫ້ອງການຊ່ວຍເຫລືອອົບພະຍົບ ແລະ ຄົນເຂົ້າເມືອງຂອງພະແນກ ສຸມຊໂນ່ໂລີການ ສຸມຊໂນ ເຮັດວຽກຮ່ວມກັນນໍາອົງການຕ່າງໆ 60 ອົງການ,ລວມທັງຫ້ອງການຕັ້ງຖິ່ນຖານອົບພະຍົບ,ອົງການຕັ້ງຢູ່ຕາມຊຸມນຸມຊົນ,ອົງການມຸ່ງໝາຍໃສ່ຊົນຊາດ,ຫ້ອງການຂອງຣັດແລະສະຖາບັນການສຶກສາ.ຫ້ອງການເຮັດວຽກຮ່ວມກັນຂອງ ORIA ມີຄວາມຊ່ຽວຊານສະເພາະໃນການເອົາການບໍລິການທີ່ເໝາະສົມທາງປະເພນີວັດທະນາທັມ ແລະ ດ້ານພາສາປາກເວົ້າ.

ກະຣຸນາສັງເກດວ່າຣາຍຣະອຽດທຸກໆຢ່າງທີ່ຖືກແລກປ່ຽນນໍາກັນ DSHS ແລະ ເພື່ອນຮ່ວມງານຢູ່ໃນຊຸມນຸມຊົນຂອງພວກເຮົາແມ່ນເປັນຄວາມລັບ ແລະ ຖືກຮັກສາໄວ້. ພວກເຮົາບໍ່ແລກປ່ຽນຣາຍຣະອຽດນໍາຫ້ອງການຣັດຖະບານບ່ອນອື່ນໆ.



# ໂຄງການຊ່ວຍເຫລືອພະຍາບານ

ໂຄງການຊ່ວຍເຫລືອພະຍາບານທີ່ຖືກບໍຣິຫານຜ່ານ Community Service Division ຈະຖືກເວົ້າເຖິງສະເມີວ່າແມ່ນ Classic Medicaid. ໂຄງການ Classic Medicaid ເອົາການຄຸ້ມກັນການປິ່ນປົວສຸຂະພາບໃຫ້ແກ່ບຸກຄົນຜູ້ທີ່ມີອາຍຸ 65 ປີ ຫລື ແກ່ກວ່າ,ຕາບອດຫລື ເສັຽອົງຄະໂດຍອີງຕາມມາດຕະຖານຂອງ Social Security. ເພື່ອວ່າຈະມີສິດໄດ້ຮັບໂຄງການ Classic Medicaid, ບຸກຄົນຕ້ອງສອດຄ່ອງນຳຂອບເຂດຂອງຣາຍໄດ້ ແລະ ຊັບສິນລວມທັງມາດຕະຖານຂອງອາຍຸ ແລະ ຄວາມເສັຽອົງຄະ. ໂຄງການ classic Medicaid ລວມເອົາ:

- **ໂຄງການພະຍາບານ SSI-ທຣິກີງາກຣໂນງກາບ ກຣຸາານຈຣໂາປເນ ຍານງມາກາເນນ (CN)**. ໂຄງການອັນນີ້ເອົາການຄຸ້ມກັນໃຫ້ແກ່ບຸກຄົນຜູ້ທີ່ສອດຄ່ອງນຳຂອບເຂດຂອງຣາຍໄດ້ ແລະ ຊັບສິນຂອງ SSI.
- **ໂຄງການພະຍາບານ SSI-ທຣິກີງາກຣໂນງກາບ ກຣໂນຈຣເບ ທຣິປເນທຣານງການ(MN).** ໂຄງການອັນນີ້,ເປັນທີ່ຮູ້ຈັກກັນວ່າ"ຈ່າຍລຸດລົງ",ເອົາການຄຸ້ມກັນ MN ໃຫ້ແກ່ບຸກຄົນຜູ້ທີ່ມີຣາຍໄດ້ ແລະ ຊັບສິນກາຍເກີນຂອບເຂດຂອງSSI. ບຸກຄົນຜູ້ທີ່ມີສິດໄດ້ຮັບ,ກາຍເປັນມີເງື່ອນໄຂໄດ້ຮັບການຄຸ້ມກນ MNຫລັງຈາກທີ່ຄ່າພະຍາບານທີ່ເກີດຂື້ນເທົ່າກັບຈຳນວນເງິນຂອງຣາຍໄດ້ຂອງຄອບຄົວທີ່ກາຍເກີນມາດຕະຖານຣາຍໄດ້ຂອງ SSI.
- ໂຄງການ **Medicare Savings program (MSP).** ໂຄງການອັນນີ້ຊ່ວຍເຫລືອຜູ້ຮັບເອົາ Medicare ຈ່າຍສຳລັບທັງຫມົດ ແລະ ສ່ວນນຶ່ງຂອງຄ່າທຳນຽມ Medicare ຂອງເຂົາເຈົ້າ.
- ໂຄງການ **Medical Care Services (MCS)**. ໂຄງການ Medical Care Services (MCS). ໂຄງການອັນນີ້ຈະເອົາການຄຸ້ມກັນໃຫ້ແກ່ບຸກຄົນຜູ້ທີ່ຖືກພົບວ່າມີເງື່ອນໄຂໄດ້ຮັບໂຄງການຊ່ວຍເຫລືອຄົນແກ່ຊະຣາ,ຕາບອດ,ຫລືເສັຽອົງຄະ (ABD) ຫລືໂຄງການສິ່ງຕໍ່ໄປຫາບ່ອນຢູ່ອາສັຍ ແລະ ຄວາມຕ້ອງການຈຳເປັນ (HEN) ແຕ່ວ່າຜູ້ທີ່ບໍ່ມີເງື່ອນໄຂໄດ້ຮັບໂຄງການClassic Medicaid ແລະ ໂຄງການຊ່ວຍເຫລືອພະຍາບານອື່ນໆຍ້ອນສະພາບຂອງການເປັນສັນຊາດຂອງເຂົາເຈົ້າ.

ໃບຄຳຮ້ອງຂໍສຳລັບເງິນສົດ ແລະ ອາຫານຈະມີໄວ້ໃຫ້ຢູ່ທີ່ *www.dshs.wa.gov/esa/community-services-offices/how-apply-services* ຫລື ໂດຍການໂທຫາສູນກາງຕິດຕໍ່ປະຊາສັມພັນໄດ້ທີ່ເລກ 1-877-501-2233.

ໃບຄຳຮ້ອງຂໍສຳລັບ Classic Medicaid ຈະມີໄວ້ໃຫ້ຢູ່ທີ່ *www.hca.wa.gov/health-care-services-supports/forms-and-publications* ໂດຍການໂທຫາສູນກາງຕິດຕໍ່ປະຊາສັມພັນໄດ້ທີ່ເລກ1-877-501-2233.



## ລາຍລະອຽດທົ່ວໄປ

ມັນມີຫລາຍໆຫົນທາງທີ່ຈະຮ້ອງຂໍເອົາການບໍລິການເຫລົ່ານີ້ຢູ່ກົມ DSHS:

- ການສຳພາດໂດຍຕົນເອງຢູ່ທີ່ຫ້ອງການບໍລິການຊຸມນຸມຊົນ (CSO). ການສຳພາດເຫລົ່ານີ້ແມ່ນໃນແບບໃຜມາຮອດກ່ອນຈະຖືກຮັບໃຊ້ກ່ອນ;ເຖິງຢ່າງໃດກໍຕາມ,ແມ່ນໃຜກໍຕາມທີ່ສະເນີຕົວເຂົ້າມາກ່ອນ 3 ໂມງແລງຈະຖືກພົບໃນມື້ນັ້ນໂລດ.
- ທາງອອນລາຍນ໌ຢູ່ທີ່ *www.WashingtonConnection.org*.
- ຍື່ນໃບຄຳຮ້ອງຂໍ:
  - ໂດຍຕົນເອງ:ສົ່ງໃບຄຳຮ້ອງຂໍຢູ່ບອກ໌ປ່ອນໄວ້ຂອງຫ້ອງການ CSO ທ້ອງຖິ່ນ.
  - ແຟກຊ໌: 1-888-338-7410
  - ສົ່ງທາງໄປສະນີ: PO Box 11699, Tacoma, WA 98411.

ຄຳຮ້ອງຂໍເປັນໃບເຈັ້ຽຈະມີໄວ້ໃຫ້ຢູ່ທີ່ ***www.dshs.wa.gov/esa/community-services-offices/how-apply-services*** ຫລື ໂດຍການໂທຫາສູນກາງຕິດຕໍ່ປະຊາສັມພັນໄດ້ທີ່ເລກ 1-877-501-2233.

ເພື່ອລາຍລະອຽດກ່ຽວກັບໂຄງການ ແລະ ການບໍລິການຢ່າງອື່ນໆຂອງກົມ Department of Social and Health Services (DSHS), ກະລຸນາແວ່ເຂົ້າປັຽມແວບໄຊທ໌ຂອງພວກເຮົາໄດ້ທີ່ *www.dshs.wa.gov*.

Washington State
Department of Social
& Health Services

*Transforming lives*

DSHS 22-1786 LA (11/18) Laotian